**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ໂຮງໝໍແມ່ ແລະ ເດັກເກີດໃໝ່**

ເລກທີ:.........../

ນະຄອນຫຼວງວຽງຈັນ, ວັນທີ:.........................

# ຂໍ້ຕົກລົງ
# ຂອງຜູ້ອຳນວຍການໂຮງໝໍແມ່ ແລະ ເດັກເກີດໃໝ່
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ພະແນກພະຍາດຍິງ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງໝໍແມ່ ແລະ ເດັກເກີດໃໝ່ ສະບັບເລກທີ 3559/ສທ, ລົງວັນທີ 12 ທັນວາ 2016;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງຄະນະອຳນວຍການໂຮງໝໍແມ່ ແລະ ເດັກເກີດໃໝ່.

## ຜູ້ອຳນວຍການໂຮງໝໍແມ່ ແລະ ເດັກເກີດໃໝ່ ອອກຂໍ້ຕົກລົງ:

## ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງພະແນກພະຍາດຍິງ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແນໃສ່ຈັດຕັ້ງປະຕິບັດວຽກງານ ໃຫ້ບໍລິການ ກວດ, ກັ່ນຕອງພະຍາດ, ບົ່ງມະຕິ, ຜ່າຕັດ ແລະ ປິ່ນປົວ ຄົນເຈັບພະຍາດຍິງ ໃຫ້ມີປະສິດທິພາບ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ພະແນກພະຍາດຍິງ ສັງກັດໃນໂຄງປະກອບການຈັດຕັ້ງຂອງໂຮງໝໍແມ່ ແລະ ເດັກເກີດໃໝ່ ຢູ່ພາຍໃຕ້ການຄຸ້ມຄອງຊີ້ນຳໂດຍກົງຂອງຜູ້ອຳນວຍການໂຮງໝໍ, ມີພາລະບົດບາດເປັນເສນາທິການໃຫ້ແກ່ຜູ້ອຳນວຍການໂຮງໝໍ ໃນການໃຫ້ບໍລິການ ກວດ, ກັ່ນຕອງພະຍາດ, ບົ່ງມະຕິ, ຜ່າຕັດ ແລະ ປິ່ນປົວ ຄົນເຈັບພະຍາດຍິງທົ່ວໄປ, ມະເຮັງນາລີເວດ ແລະ ພະຍາດນົມ; ຄົ້ນຄວ້າເຕັກນິກ-ວິທະຍາສາດການແພດ; ສົ່ງເສີມວຽກງານການຮຽນ-ການສອນ ແລະ ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນ ຍົກລະດັບດ້ານເຕັກນິກວິຊາການ.

## ໝວດທີ 2
### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ພະແນກພະຍາດຍິງ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ ຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ລະບຽບການຂອງລັດ, ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂອງໂຮງໝໍແມ່ ແລະ ເດັກເກີດໃໝ່ ກ່ຽວກັບວຽກງານກວດ, ບົ່ງມະຕິ, ຜ່າຕັດ ແລະ ປິ່ນປົວ;
2. ໃຫ້ການບໍລິການກວດ, ບົ່ງມະຕິ, ປິ່ນປົວ ແລະ ຜ່າຕັດ ພະຍາດຍິງທົ່ວໄປ ແລະ ພະຍາດຕິດຕໍ່ທາງເພດສໍາພັນ ຄົນເຈັບກວດເຂດນອກ ແລະ ຄົນເຈັບນອນ;
3. ໃຫ້ບໍລິການກວດ, ບົ່ງມະຕິ, ປິ່ນປົວ ແລະ ໃຫ້ຄໍາປຶກສາແກ່ແມ່ຍິງທີ່ຖືກທໍາຮ້າຍທາງດ້ານຮ່າງກາຍ ແລະ ຈິດໃຈ;
4. ໃຫ້ການບໍລິການກວດ, ບົ່ງມະຕິ, ປິ່ນປົວ ພະຍາດມະເຮັງນົມ, ພະຍາດມະເຮັງປາກມົດລູກ, ພະຍາດມະເຮັງຮັງໄຂ່, ພະຍາດມະເຮັງເຍື່ອເມືອກມົດລູກ ແລະ ພະຍາດມະເຮັງອື່ນໆກ່ຽວກັບພະຍາດຍິງ ຄົນເຈັບກວດເຂດນອກ ແລະ ຄົນເຈັບນອນ;
5. ໃຫ້ການບໍລິການກວດ, ບົ່ງມະຕິ, ປິ່ນປົວ ຄວາມຜິດປົກກະຕິຂອງເຕົ້ານົມ ແລະ ມົດລູກ, ຄົນເຈັບກວດເຂດນອກ ແລະ ຄົນເຈັບນອນ;
6. ໃຫ້ຄໍາປຶກສາ, ສຸຂະສຶກສາ ແລະ ຂໍ້ມູນຂ່າວສານຕ່າງໆທາງດ້ານການແພດ ໃຫ້ແກ່ຄົນເຈັບ ແລະ ພີ່ນ້ອງຄົນເຈັບ;
7. ປະຕິບັດວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບ;
8. ໃຫ້ຄໍາປຶກສາ ແລະ ແລກປ່ຽນຄໍາຄິດຄໍາເຫັນຕໍ່ການກວດ, ບົ່ງມະຕິ, ປິ່ນປົວ ແລະ ຜ່າຕັດ ຄົນເຈັບພະຍາດຍິງ ໃນກໍລະນີຄົນເຈັບປິ່ນປົວຢູ່ພະແນກອື່ນ ແລະ ເຊີນພະແນກອື່ນມາ ກວດ, ບົ່ງມະຕິ ແລະ ປິ່ນປົວຄົນເຈັບຢູ່ພະແນກ ເມື່ອມີພະຍາດອື່ນແຊກຊ້ອນ;
9. ຄົ້ນຄວ້າເຕັກນິກ, ວິທະຍາສາດການແພດ, ເຜີຍແຜ່ ແລະ ນໍາໃຊ້ຜົນສໍາເລັດດ້ານວິທະຍາສາດ ເຕັກໂນໂລຍີການແພດກ່ຽວກັບວຽກງານການປິ່ນປົວຢູ່ພາຍໃນ ແລະ ຕ່າງປະເທດ;
10. ສ້າງແຜນພັດທະນາ ແລະ ປັບປຸງການບໍລິການໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ;
11. ໃຫ້ການຝຶກອົບຮົມແກ່ພະນັກງານພາຍໃນພະແນກ, ພະແນກອ້ອມຂ້າງ ແລະ ທ້ອງຖິ່ນ;
12. ສົ່ງເສີມວຽກງານການຮຽນ-ການສອນ (ສິດສອນນັກສຶກສາ ຢູ່ສະຖານການສຶກສາສາທາລະນະສຸກ ແລະ ລົງຝຶກຫັດຕົວຈິງຢູ່ໂຮງໝໍ);
13. ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກວິຊາການ ກວດ, ບົ່ງມະຕິ, ປິ່ນປົວ ແລະ ຜ່າຕັດ ຄົນເຈັບພະຍາດຍິງ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ;
14. ປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນປະຈໍາເດືອນ ແລະ ປະຊຸມວິຊາການ ເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ມູນໃໝ່ເພື່ອໃຊ້ເຂົ້າໃນວຽກງານ ກວດ, ບົ່ງມະຕິ, ປິ່ນປົວ ແລະ ຜ່າຕັດ ຄົນເຈັບ ພະຍາດຍິງ ຢ່າງຕໍ່ເນື່ອງກັບບັນດາ ພະແນກ, ໂຮງໝໍ, ອົງການຈັດຕັ້ງສາກົນພາຍໃນ ແລະ ຕ່າງປະເທດ;
15. ເກັບກໍາ ແລະ ສັງລວມສະຖິຕິ ຄົນເຈັບທີ່ມາໃຊ້ບໍລິການ ຢູ່ພະແນກພະຍາດຍິງ ປະຈໍາອາທິດ, ປະຈໍາເດືອນ;

16. ຂຶ້ນແຜນ, ຄຸ້ມຄອງ ງົບປະມານ, ວັດຖຸອຸປະກອນ, ຢາ, ນໍ້າຢາເຄມີ, ເຄື່ອງມື ແລະ ອຸປະກອນການແພດ ເພື່ອຮັບໃຊ້ໃນການປະຕິບັດວຽກງານຂອງພະແນກ, ກວດກາຄວາມສະອາດ ແລະ ຄວາມເປັນລະບຽບ ພາຍໃນພະແນກ;
17. ສະຫຼຸບລາຍງານການເຄື່ອນໄຫວວຽກງານຂອງພະແນກ ໃຫ້ຜູ້ອໍານວຍການຂອງໂຮງໝໍຊາບເປັນ ປົກກະຕິ;
18. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະອໍານວຍການໂຮງໝໍ.

**ມາດຕາ 4 ຂອບເຂດສິດ**

ຂອບເຂດສິດຂອງ ພະແນກພະຍາດຍິງ ມີດັ່ງນີ້:

1. ຍັ້ງຢືນຜົນການໃຫ້ບໍລິການ ກວດ, ບົ່ງມະຕິ, ປິ່ນປົວ ແລະ ຜ່າຕັດ ຄົນເຈັບ;
2. ຕົກລົງບັນຫາລວມຂອງພະແນກ;
3. ແບ່ງວຽກ ແລະ ແບ່ງຄວາມຮັບຜິດຊອບໃຫ້ແກ່ພະນັກງານຂອງພະແນກ;
4. ຄົ້ນຄວ້າ ແລະ ນໍາສະເໜີການກໍ່ສ້າງ, ບໍາລຸງ ແລະ ຍົກລະດັບ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນ ພະນັກງານທີ່ຂຶ້ນກັບການຄຸ້ມຄອງຂອງພະແນກ;
5. ສະເໜີຄໍາຄິດຄໍາເຫັນຕໍ່ຄະນະອໍານວຍການ ໂຮງໝໍ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງພະ ແນກ;
6. ຍັ້ງຢືນໃຫ້ລາພັກ ຫຼື ບໍ່ໃຫ້ລາພັກ ຂອງພະນັກງານທີ່ສັງກັດຢູ່ໃນພະແນກ;
7. ເຂົ້າຮ່ວມກອງປະຊຸມປຶກສາຫາລື, ປະກອບຄໍາຄິດຄໍາເຫັນ ແລະ ແລກປ່ຽນບົດຮຽນທີ່ພົວພັນກັບໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະແນກ ຕາມການມອບໝາຍ;
8. ປະຕິບັດສິດອື່ນ ຕາມການມອບໝາຍຂອງຄະນະອໍານວຍການໂຮງໝໍ.

# ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກຂອງ ພະແນກພະຍາດຍິງ ປະກອບມີ 04 ກຸ່ມວຽກ ຄື:

1. ກຸ່ມວຽກກວດພະຍາດຍິງທົ່ວໄປ;
2. ກຸ່ມວຽກກວດພະຍາດມະເຮັງນາລີເວດ;
3. ກຸ່ມວຽກກວດຄວາມຜິດປົກກະຕິຂອງເຕົ້ານົມ ແລະ ມົດລູກ;
4. ກຸ່ມວຽກພະຍາບານ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນ ຂອງພະແນກພະຍາດຍິງ ປະກອບດ້ວຍ:

1. ຫົວໜ້າພະແນກ 01 ທ່ານ ຮັບຜິດຊອບຕໍ່ ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການໂຮງໝໍກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຂອງພະແນກ.

   ໃນກໍລະນີຕິດຂັດ ຫົວໜ້າພະແນກ ຕ້ອງມອບສິດໃຫ້ຮອງຫົວໜ້າພະແນກທ່ານໃດທ່ານໜຶ່ງ ເປັນຜູ້ຮັກສາການແທນ.

2. ຮອງຫົວໜ້າພະແນກຈຳນວນໜຶ່ງ ຊ່ວຍຫົວໜ້າພະແນກໃນການຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງ ງານ ແລະ ການມອບໝາຍຂອງຫົວໜ້າພະແນກ; ຮັບຜິດຊອບຕໍ່ຫົວໜ້າພະແນກ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ.

   ຮອງຫົວໜ້າພະແນກ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານ ທີ່ໄດ້ຈັດຕັ້ງປະຕິບັດໃນ ໄລຍະຮັກສາແທນນັ້ນໃຫ້ ຫົວໜ້າພະແນກພາຍຫລັງກັບມາປະຈຳການ.

3. ວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມ ກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

## ໝວດທີ 4
### ໜ້າວຽກລະອຽດຂອງແຕ່ລະກຸ່ມວຽກ

**ມາດຕາ 7 ໜ້າວຽກລະອຽດຂອງ ກຸ່ມວຽກກວດພະຍາດຍິງທົ່ວໄປ**

ໜ້າວຽກລະອຽດ ຂອງກຸ່ມວຽກກວດພະຍາດຍິງທົ່ວໄປ ມີດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ ຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ລະບຽບການຂອງລັດ, ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂອງໂຮງໝໍແມ່ ແລະ ເດັກເກີດໃໝ່ ກ່ຽວກັບວຽກງານກວດ, ບົ່ງມະຕິ, ຜ່າຕັດ ແລະ ປິ່ນປົວ;
2. ໃຫ້ການບໍລິການ ກວດ, ບົ່ງມະຕິ ແລະ ປິ່ນປົວ ພະຍາດຍິງທົ່ວໄປ ແລະ ພະຍາດຕິດຕໍ່ທາງເພດສຳພັນ ຄົນເຈັບກວດເຂດນອກ ແລະ ຄົນເຈັບນອນ ລວມທັງໃຫ້ຄຳປຶກສາແກ່ຄົນເຈັບ;
3. ຜ່າຕັດ ເປີດໜ້າທ້ອງ ແລະ ຜ່າຕັດຜ່ານທໍ່ ໃຫ້ຄົນເຈັບທີ່ກ່ຽວຂ້ອງກັບພະຍາດຍິງ ຕາມການບົ່ງມະຕິ ແລະ ຕາມແຜນການປິ່ນປົວ;
4. ໃຫ້ບໍລິການ ກວດ, ບົ່ງມະຕິ, ປິ່ນປົວ ແລະ ໃຫ້ຄຳປຶກສາແກ່ແມ່ຍິງທີ່ຖືກທຳຮ້າຍທາງດ້ານຮ່າງກາຍ ແລະ ຈິດໃຈ;
5. ເຮັດຫັດຖະການ ເຊັ່ນ: papsmeas, colposcopie ຂູດມົດລູກ.
6. ໃຫ້ຄຳປຶກສາ, ສຸຂະສຶກສາ ແລະ ຂໍ້ມູນຂ່າວສານຕ່າງໆທາງດ້ານການແພດ ໃຫ້ແກ່ຄົນເຈັບ ແລະ ພີ່ນ້ອງຄົນເຈັບ;
7. ປະຕິບັດວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບ;
8. ໃຫ້ຄຳປຶກສາ ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ການກວດ, ບົ່ງມະຕິ, ປິ່ນປົວ ແລະ ຜ່າຕັດ ຄົນເຈັບພະຍາດຍິງ ໃນກໍລະນີຄົນເຈັບປິ່ນປົວຢູ່ພະແນກອື່ນ ແລະ ເຊີນພະແນກອື່ນມາ ກວດ, ບົ່ງມະຕິ ແລະ ປິ່ນປົວຄົນເຈັບຢູ່ພະແນກ ເມື່ອມີພະຍາດອື່ນແຊກຊ້ອນ;
9. ຄົ້ນຄວ້າເຕັກນິກ, ວິທະຍາສາດການແພດ, ເຜີຍແຜ່ ແລະ ນຳໃຊ້ຜົນສຳເລັດດ້ານວິທະຍາສາດ ເຕັກໂນໂລຍີການແພດກ່ຽວກັບວຽກງານການປິ່ນປົວ ຢູ່ພາຍໃນ ແລະ ຕ່າງປະເທດ;
10. ສ້າງແຜນພັດທະນາ ແລະ ປັບປຸງການບໍລິການໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ;
11. ໃຫ້ການຝຶກອົບຮົມແກ່ພະນັກງານພາຍໃນພະແນກ, ພະແນກອ້ອມຂ້າງ ແລະ ທ້ອງຖິ່ນ;
12. ສົ່ງເສີມວຽກງານການຮຽນ-ການສອນ (ສິດສອນນັກສຶກສາ ຢູ່ສະຖານການສຶກສາສາທາລະນະສຸກ ແລະ ລົງຝຶກຫັດຕົວຈິງຢູ່ໂຮງໝໍ);
13. ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກວິຊາການ ກວດ, ບົ່ງມະຕິ, ປິ່ນປົວ ແລະ ຜ່າຕັດ ຄົນເຈັບພະຍາດຍິງ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ;
14. ປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນປະຈຳເດືອນ ແລະ ປະຊຸມວິຊາການ ເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ມູນໃໝ່ເພື່ອໃຊ້ເຂົ້າໃນວຽກງານ ກວດ, ບົ່ງມະຕິ, ປິ່ນປົວ ແລະ ຜ່າຕັດ ຄົນເຈັບພະຍາດຍິງ ຢ່າງຕໍ່ເນື່ອງກັບບັນດາ ພະແນກ, ໂຮງໝໍ, ອົງການຈັດຕັ້ງສາກົນພາຍໃນ ແລະ ຕ່າງປະ ເທດ;
15. ສະຫຼຸບລາຍງານການເຄື່ອນໄຫວວຽກງານ ຢ່າງເປັນປົກກະຕິ;
16. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 8 ໜ້າວຽກລະອຽດຂອງກຸ່ມວຽກມະເຮັງນາລີເວດ**

ໜ້າວຽກລະອຽດ ຂອງກຸ່ມວຽກມະເຮັງນາລີເວດ ມີດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ ຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ລະບຽບການຂອງລັດ, ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂອງໂຮງໝໍແມ່ ແລະ ເດັກເກີດໃໝ່ ກ່ຽວກັບວຽກງານກວດ, ບົ່ງມະຕິ, ຜ່າຕັດ ແລະ ປິ່ນປົວ;
2. ໃຫ້ການບໍລິການ ກວດ, ບົ່ງມະຕິ, ປິ່ນປົວ ພະຍາດມະເຮັງນົມ, ພະຍາດມະເຮັງປາກມົດລູກ, ພະຍາດມະເຮັງຮັງໄຂ່, ພະຍາດມະເຮັງເຍື່ອເມືອກມົດລູກ ແລະ ພະຍາດມະເຮັງອື່ນໆກ່ຽວກັບພະຍາດຍິງ ຄົນເຈັບກວດເຂດນອກ ແລະ ຄົນເຈັບນອນ ແລະ ນຳສົ່ງຄົນເຈັບໄປໃສ່ເຄມີບຳບັດ ແລະ ສາຍແສງ ຕາມການບົ່ງມະຕິ ແລະ ຕາມແຜນການປິ່ນປົວ;
3. ຜ່າຕັດເປີດໜ້າທ້ອງ ແລະ ຜ່າຕັດຜ່ານທໍ່ ໃນຄົນເຈັບທີ່ກ່ຽວຂ້ອງກັບພະຍາດມະເຮັງນາລີເວດ;
4. ໃຫ້ຄຳປຶກສາ, ສຸຂະສຶກສາ ແລະ ຂໍ້ມູນຂ່າວສານຕ່າງໆທາງດ້ານການແພດ ໃຫ້ແກ່ຄົນເຈັບ ແລະ ພີ່ນ້ອງຄົນເຈັບ;
5. ປະຕິບັດວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບ;
6. ໃຫ້ຄຳປຶກສາ ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ການກວດ, ບົ່ງມະຕິ, ປິ່ນປົວ ຄົນເຈັບພະຍາດມະເຮັງນາລີເວດ ໃນກໍລະນີຄົນເຈັບປິ່ນປົວຢູ່ພະແນກອື່ນ ແລະ ເຊີນພະແນກອື່ນມາ ກວດ, ບົ່ງມະຕິ ແລະ ປິ່ນປົວຄົນເຈັບຢູ່ພະແນກ ເມື່ອມີພະຍາດອື່ນແຊກຊ້ອນ ;
7. ຄົ້ນຄວ້າເຕັກນິກ, ວິທະຍາສາດການແພດ, ເຜີຍແຜ່ ແລະ ນຳໃຊ້ຜົນສຳເລັດດ້ານວິທະຍາສາດ ເຕັກໂນໂລຍີການແພດກ່ຽວກັບວຽກງານການປິ່ນປົວ ຢູ່ພາຍໃນ ແລະ ຕ່າງປະເທດ;
8. ສ້າງແຜນພັດທະນາ ແລະ ປັບປຸງການບໍລິການໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ;
9. ໃຫ້ການຝຶກອົບຮົມແກ່ພະນັກງານພາຍໃນພະແນກ, ພະແນກອ້ອມຂ້າງ ແລະ ທ້ອງຖິ່ນ;
10. ສົ່ງເສີມວຽກງານການຮຽນ-ການສອນ (ສິດສອນນັກສຶກສາ ຢູ່ສະຖານການສຶກສາສາທາລະນະສຸກ ແລະ ລົງຝຶກຫັດຕົວຈິງຢູ່ໂຮງໝໍ);
11. ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກວິຊາການ ກວດ, ບົ່ງມະຕິ, ປິ່ນປົວ ແລະ ຜ່າຕັດ ຄົນເຈັບພະຍາດມະເຮັງນາລີເວດ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ;
12. ປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນປະຈຳເດືອນ ແລະ ປະຊຸມວິຊາການ ເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ມູນໃໝ່ເພື່ອໃຊ້ເຂົ້າໃນວຽກງານ ກວດ, ບົ່ງມະຕິ, ປິ່ນປົວ ຄົນເຈັບພະຍາດມະເຮັງນາລີເວດ ຢ່າງຕໍ່ເນື່ອງກັບບັນດາ ພະແນກ, ໂຮງໝໍ, ອົງການຈັດຕັ້ງສາກົນພາຍໃນ ແລະ ຕ່າງປະເທດ;
13. ສະຫຼຸບລາຍງານການເຄື່ອນໄຫວວຽກງານ ຢ່າງເປັນປົກກະຕິ;
14. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 9 ໜ້າວຽກລະອຽດຂອງກຸ່ມວຽກກວດຄວາມຜິດປົກກະຕິຂອງເຕົ້ານົມ ແລະ ມົດລູກ**

ໜ້າວຽກລະອຽດ ຂອງກຸ່ມວຽກກວດຄວາມຜິດປົກກະຕິຂອງເຕົ້ານົມ ແລະ ມົດລູກ ມີດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ ຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ລະບຽບການຂອງລັດ, ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂອງໂຮງໝໍແມ່ ແລະ ເດັກເກີດໃໝ່ ກ່ຽວກັບວຽກງານກວດ, ບົ່ງມະຕິ, ຜ່າຕັດ ແລະ ປິ່ນປົວ;
2. ໃຫ້ການບໍລິການ ກວດ, ບົ່ງມະຕິ, ປິ່ນປົວ ຄວາມຜິດປົກກະຕິຂອງເຕົ້ານົມ ແລະ ມົດລູກ ຄົນເຈັບກວດເຂດນອກ ແລະ ຄົນເຈັບນອນ;
3. ເຮັດຫັດຖະການ ເຊັ່ນ: ເຈາະລະບາຍນົມອັກເສບ.
4. ໃຫ້ຄຳປຶກສາ, ສຸຂະສຶກສາ ແລະ ຂໍ້ມູນຂ່າວສານຕ່າງໆທາງດ້ານການແພດ ໃຫ້ແກ່ຄົນເຈັບ ແລະ ພີ່ນ້ອງຄົນເຈັບ;
5. ປະຕິບັດວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບ;
6. ໃຫ້ຄຳປຶກສາ ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ການກວດ, ບົ່ງມະຕິ, ປິ່ນປົວ ຄົນເຈັບທີ່ມີຄວາມຜິດປົກກະຕິຂອງເຕົ້ານົມ ແລະ ມົດລູກ ໃນກໍລະນີຄົນເຈັບປິ່ນປົວຢູ່ພະແນກອື່ນ ແລະ ເຊີນພະແນກອື່ນມາກວດ, ບົ່ງມະຕິ ແລະ ປິ່ນປົວຄົນເຈັບຢູ່ພະແນກ ເມື່ອມີພະຍາດອື່ນແຊກຊ້ອນ ;
7. ຄົ້ນຄວ້າເຕັກນິກ, ວິທະຍາສາດການແພດ, ເຜີຍແຜ່ ແລະ ນຳໃຊ້ຜົນສຳເລັດດ້ານວິທະຍາສາດ ເຕັກໂນໂລຍີການແພດກ່ຽວກັບວຽກງານການປິ່ນປົວ ຢູ່ພາຍໃນ ແລະ ຕ່າງປະເທດ;
8. ສ້າງແຜນພັດທະນາ ແລະ ປັບປຸງການບໍລິການໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ;
9. ໃຫ້ການຝຶກອົບຮົມແກ່ພະນັກງານພາຍໃນພະແນກ, ພະແນກອ້ອມຂ້າງ ແລະ ທ້ອງຖິ່ນ;
10. ສົ່ງເສີມວຽກງານການຮຽນ-ການສອນ (ສິດສອນນັກສຶກສາ ຢູ່ສະຖານການສຶກສາສາທາລະນະສຸກ ແລະ ລົງຝຶກຫັດຕົວຈິງຢູ່ໂຮງໝໍ);
11. ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກວິຊາການ ກວດ, ບົ່ງມະຕິ, ປິ່ນປົວ ຄົນເຈັບທີ່ມີຄວາມຜິດປົກກະຕິຂອງເຕົ້ານົມ ແລະ ມົດລູກ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ;
12. ປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນປະຈຳເດືອນ ແລະ ປະຊຸມວິຊາການ ເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ມູນໃໝ່ເພື່ອໃຊ້ເຂົ້າໃນວຽກງານ ກວດ, ບົ່ງມະຕິ, ປິ່ນປົວ ຄົນເຈັບທີ່ມີຄວາມຜິດປົກກະຕິຂອງເຕົ້ານົມ ແລະ ມົດລູກ ຢ່າງຕໍ່ເນື່ອງກັບບັນດາ ພະແນກ, ໂຮງໝໍ, ອົງການຈັດຕັ້ງສາກົນພາຍໃນ ແລະ ຕ່າງປະເທດ;
13. ສະຫຼຸບລາຍງານການເຄື່ອນໄຫວວຽກງານ ຢ່າງເປັນປົກກະຕິ;
14. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 10 ໜ້າວຽກລະອຽດຂອງກຸ່ມວຽກພະຍາບານ**

ໜ້າວຽກລະອຽດ ຂອງກຸ່ມວຽກພະຍາບານ ມີດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງຜັນຂະຫຍາຍ ມະຕິ, ຄໍາສັ່ງ ຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂອງໂຮງໝໍແມ່ ແລະ ເດັກເກີດໃໝ່ ກ່ຽວກັບວຽກງານການບໍລິການພະຍາບານ;
2. ຮັບຕ້ອນ, ໃຫ້ຄໍາແນະນໍາ ຂັ້ນຕອນການກວດພະຍາດ ແລະ ກົດລະບຽບຕ່າງໆ, ປະກອບເອກະສານ ແລະ ເຊັນໃບຍິນຍອມໃນການກວດ ແລະ ການປິ່ນປົວຕ່າງໆ, ເອົາອາການຊີວິດຄົນເຈັບ ກ່ອນເຂົ້າຮັບບໍລິການກວດ, ບົ່ງມະຕິ ແລະ ປິ່ນປົວຈາກທ່ານໝໍ;
3. ກະກຽມສະຖານທີ່, ຕຽງນອນ, ຜ້າປູຕຽງ ຢູ່ຫ້ອງກວດເຂດນອກ ແລະ ຕຶກນອນ;
4. ຊ່ວຍກະກຽມ ຢາ, ເຄື່ອງມື ແລະ ອຸປະກອນການແພດ ເພື່ອກວດ ແລະ ເຮັດຫັດຖະການຕ່າງໆ;
5. ຊ່ວຍທ່ານໝໍໃນການກວດພະຍາດ, ບົ່ງມະຕິ, ປິ່ນປົວ ຄົນເຈັບພະຍາດຍິງທົ່ວໄປ, ຄົນເຈັບທີ່ຖືກທໍາຮ້າຍຮ່າງກາຍ, ຄົນເຈັບພະຍາດມະເຮັງນາລີເວດ, ຄົນເຈັບທີ່ມີຄວາມຜິດປົກກະຕິຂອງເຕົ້ານົມ ແລະ ມີດລູກ;
6. ຊ່ວຍເກັບຕົວຢ່າງເລືອດ ແລະ ຊິ້ນສ່ວນຕ່າງໆ ທີ່ໄດ້ມາຈາກຄົນເຈັບ ເພື່ອນໍາສົ່ງຫ້ອງກວດວິເຄາະ ແລະ ຕິດຕາມເອົາຜົນກວດຄືນ;
7. ລ້າງ-ອົບ ແລະ ນໍາສົ່ງອຸປະກອນເຄື່ອງມື ໄປອະເຊື້ອ ຕາມຫຼັກການ;
8. ຊ່ວຍທ່ານໝໍໃນການກະກຽມຄົນເຈັບຜ່າຕັດ, ຂຶ້ນແຜນຜ່າຕັດ, ກະກຽມຫ້ອງຜ່າຕັດ, ເຄື່ອງມື-ອຸປະກອນການແພດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
9. ເຂົ້າຮ່ວມການຜ່າຕັດກັບທີມທ່ານໝໍ ພ້ອມທັງ ອະນາໄມຫ້ອງຜ່າຕັດ, ລ້າງ-ອົບ ແລະ ນໍາສົ່ງເຄື່ອງມື-ອຸປະກອນການແພດໄປອະເຊື້ອ ພາຍຫຼັງການຜ່າຕັດຕາມຫຼັກການ;
10. ຕິດຕາມອາການຄົນເຈັບຫຼັງການຜ່າຕັດ, ລ້າງບາດ, ເອົາອາການຊີວິດ, ບັນທຶກການປິ່ນປົວ, ແນະນໍາການກິນຢາ ຕາມໃບສັ່ງຢາຂອງທ່ານໝໍ ແລະ ເຮັດຫັດຖະການຕາມແຜນການປິ່ນປົວ;
11. ໃຫ້ຄໍາປຶກສາ, ສຸຂະສຶກສາ ແລະ ຂໍ້ມູນຂ່າວສານຕ່າງໆທາງດ້ານການແພດ ໃຫ້ແກ່ຄົນເຈັບ ແລະ ພີ່ນ້ອງຄົນເຈັບ;
12. ປະຕິບັດວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບ;
13. ຄົ້ນຄວ້າເຕັກນິກ, ວິທະຍາສາດການແພດ, ເຜີຍແຜ່ ແລະ ນໍາໃຊ້ຜົນສໍາເລັດດ້ານວິທະຍາສາດ ເຕັກໂນໂລຍີການແພດກ່ຽວກັບວຽກງານການບໍລິການພະຍາບານ ຢູ່ພາຍໃນ ແລະ ຕ່າງປະເທດ;
14. ສ້າງແຜນພັດທະນາ ແລະ ປັບປຸງການບໍລິການໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ;
15. ໃຫ້ການຝຶກອົບຮົມແກ່ພະນັກງານພາຍໃນພະແນກ, ພະແນກອ້ອມຂ້າງ ແລະ ທ້ອງຖິ່ນ;
16. ສົ່ງເສີມວຽກງານການຮຽນ-ການສອນ (ສິດສອນນັກສຶກສາ ຢູ່ສະຖານການສຶກສາສາທາລະນະສຸກ ແລະ ລົງຝຶກຫັດຕົວຈິງຢູ່ໂຮງໝໍ);
17. ລົງຊ່ວຍໂຮງໝໍຂັ້ນທ້ອງຖິ່ນຍົກລະດັບຄວາມສາມາດດ້ານເຕັກນິກວິຊາການດ້ານການພະຍາບານ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ;
18. ປະຊຸມແລກປ່ຽນ ແລະ ຖອດຖອນບົດຮຽນປະຈໍາເດືອນ ແລະ ປະຊຸມວິຊາການ ເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ມູນໃໝ່ເພື່ອໃຊ້ເຂົ້າໃນວຽກງານບໍລິການພະຍາບານ ປະຈໍາປີຢ່າງຕໍ່ເນື່ອງກັບບັນດາ ພະແນກ , ໂຮງໝໍ, ອົງການຈັດຕັ້ງສາກົນພາຍໃນ ແລະ ຕ່າງປະເທດ;
19. ເກັບກໍາ ແລະ ສັງລວມສະຖິຕິ ຄົນເຈັບທີ່ມາໃຊ້ບໍລິການ ຢູ່ພະແນກພະຍາດຍິງ ປະຈໍາອາທິດ, ປະຈໍາເດືອນ;

20. ຂຶ້ນແຜນ, ຄຸ້ມຄອງ ງົບປະມານ, ວັດຖຸອຸປະກອນ, ຢາ, ນໍ້າຢາເຄມີ, ເຄື່ອງມື ແລະ ອຸປະກອນການແພດ ເພື່ອຮັບໃຊ້ໃນການປະຕິບັດວຽກງານຂອງພະແນກ, ກວດກາຄວາມສະອາດ ແລະ ຄວາມເປັນລະບຽບ ພາຍໃນພະແນກ;
21. ສະຫຼຸບລາຍງານການເຄື່ອນໄຫວວຽກງານຂອງພະແນກ ໃຫ້ຄະນະອຳນວຍການຂອງໂຮງໝໍຊາບເປັນ ປົກກະຕິ;
22. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

## ໝວດທີ 5
### ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 11 ຫຼັກການ**

ພະແນກພະຍາດຍິງ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ;
2. ປະຕິບັດລະບອບຫົວໜ້າດຽວຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະ ທຸກຂັ້ນ ພ້ອມທັງມອບສິດ ແລະ ຄວາມຮັບຜິດຊອບ ໃຫ້ສົມເຫດສົມຜົນໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ ແລະ ແຕ່ລະຄົນ.

**ມາດຕາ 12 ແບບແຜນວິທີເຮັດວຽກ**

ພະແນກພະຍາດຍິງ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ທຸກການເຄື່ອນໄຫວວຽກງານ ຂອງພະແນກແມ່ນອີງໃສ່ຫຼັກການ ແລະ ລະບຽບການຂອງກົມ;
2. ເຮັດວຽກຢ່າງມີ ແຜນການ, ແຜນງານ ແລະ ໂຄງການລະອຽດ; ມີການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ; ແກ້ໄຂຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
3. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳ ເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອຊຸກຍູ້ຕິດຕາມ ແລະ ກວດກາປະເມີນຜົນ, ເກັບກຳສະພາບລວມ ແລະ ສະເພາະດ້ານ ຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານໃຫ້ຂັ້ນເທິງ.

## ໝວດທີ 6
### ບົດບັນຍັດສຸດທ້າຍ

**ມາດຕາ 13 ງົບປະມານ**

ພະແນກພະຍາດຍິງ ມີງົບປະມານເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ ຕາມການຈັດສັນ-ແບ່ງປັນ ແລະ ຕາມການອະນຸມັດຂອງຄະນະອຳນວຍການໂຮງໝໍ.

**ມາດຕາ 14 ການຈັດຕັ້ງປະຕິບັດ**

ພະແນກພະຍາດຍິງ, ບັນດາພະແນກພາຍໃນໂຮງໝໍ ແລະພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ອຳນວຍການໂຮງໝໍແມ່ ແລະ ເດັກເກີດໃໝ່**